ໜັງສືພິມລາຍວັນ
# ລາວພັດທະນາ
Lao Phatthana Daily
E-mail: laosphatthana@yahoo.com
ະໜົນເສດຖາທິລາດ, ນະຄອນຫລວງວຽງຈັນ, ໂທ (856-21) 263860 . 215869 ແຟັກ : (856-21) 263 860
ປີທີ 3
ສະບັບທີ 645
ວັນ ສຸກ
ທີ 26 ກັນຍາ
2008

## ແມ່ນ້ຳຂອງສາກົນຮ່ວມປຶກສາຫາລື ກະນາໄຟຟ້ານ້ຳຕົກໃນອ່າງແມ່ນ້ຳຂອງ

້ຳຂອງສາກົນ ບຊົງເຂດກ່ຽວ ລວງວຽງຈັນ ອງປະຊຸມດັ່ງ ວຍງານລັດຖະ ະຖາບັນການ ເງິນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ບັນດາກຸ່ມພົນລະເຮືອນສັງຄົມຕ່າງໆ, ບັນດາອົງການຈັດຕັ້ງສາກົນ ແລະ ຕົວແທນຜູ້ໃຫ້ທຶນທີ່ເປັນຄູ່ຮ່ວມ ພັດທະນາຂອງຄະນະກຳມາທິການແມ່ນ້ຳຂອງຈຳນວນ 200 ກວ່າທ່ານ.

ອ່ານຕໍ່ໜ້າ 2



## ລັດຖະມົນຕີກະຊວງກະສິກຳ-ປ່າໄມ້ ອອກແຈ້ງການແນະນຳໃຫ້ເອົາໃຈໃສ່ ຜະລິດກະເສດສຸມດ້ວຍກ້າກິບດຽວ

ຕໍ່ຈາກໜ້າ.......................1

ປະສິດທິຜົນສູງເປັນວິທີການແບບໃໝ່ ແລະ ຈະກ້າວໄປສູ່ການຜະລິດເຂົ້າເປັນສິນຄ້າໃນອະນາຄົດ.

ສະນັ້ນ, ເພື່ອສູ້ຊົນການຜະລິດ ເຂົ້ານາແຊງ ສົກປີ 2008-2009 ໃນເຂດຊົນລະປະທານໃຫ້ບັນລຸ 120.000 ເຮັກຕາຕ້ອງພ້ອມກັນ ສູ້ຊົນປະຕິບັດແຜນການປູກເຂົ້າ ແບບກະເສດສຸມ SRI (ດຳນາກ້າ ກິບດຽວ) ຢ່າງເປັນຂະບວນໃນ ເນື້ອທີ່ຮັບປະກັນສະໜອງນ້ຳຊົນລະປະທານເຂດຈຸດສຸມ ແລະ ໂຄງການຊົນລະປະທານທີ່ມີການ ຈັດຕັ້ງກຸ່ມຜູ້ນຳໃຊ້ນ້ຳ ໂດຍມອບໝາຍໃຫ້ກົມຊົນລະປະທານເຂດຈຸດສຸມ ແລະ ໂຄງການຊົນລະປະທານທີ່ມີການຈັດຕັ້ງກຸ່ມຜູ້ນຳໃຊ້ເປັນໃຈກາງໃນການ ປະສານສົມທົບກັບທຸກພາກສ່ວນໃນການຈັດຕັ້ງປະຕິບັດ ໃຫ້ເປັນຂະບວນຟົດຟື້ນ, ແນວພັນ, ເຕັກນິກສຳລັບການຜະລິດແບບກະເສດສຸມດຳນາແບບ ກ້າກິບດຽວ ກົມຊົນລະປະທານຈະເປັນຜູ້ຮັບຜິດຊອບ ຝຸ່ນ,ປຸຍ, ແຮງງານ ແມ່ນເປັນພາລະຂອງຊາວນາເອງ ພ້ອມດຽວກັນນັ້ນກໍມອບໃຫ້ວິຊາການຂະແໜງຊົນລະປະທານ ເອົາໃຈໃສ່ຕິດຕາມການສະໜອງນ້ຳພ້ອມທັງປະເມີນຜົນການນຳໃຊ້ຊົນລະປະທານເພື່ອສົມທຽບລະຫວ່າງການນຳໃຊ້ນ້ຳໃຫ້ແກ່ນາດຳກ້າກິບດຽວກັບການປັກດຳແບບດັ້ງເດີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພະແນກກະສິກຳແລະປ່າໄມ້ແຂວງ, ນະຄອນຫລວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງຈົ່ງພ້ອມກັນສູ້ຊົນເພື່ອບັນລຸຕົວເລກຄາດໝາຍນີ້ດ້ວຍ.

## 6 ປະເທດ GMS ຫາລືແກ້ໄຂ

## ລັດຖະມົນຕີກະຊວງກະສິກຳ-ປ່າໄມ້ ອອກແຈ້ງການແນະນຳໃຫ້ເອົາໃຈໃສ່ ຜະລິດກະເສດສຸມດ້ວຍກ້າກິບດຽວ

ໃນວັນທີ 24ກັນຍານີ້, ລັດຖະມົນຕີກະຊວງກະສິກຳ-ປ່າໄມ້ ໄດ້ອອກແຈ້ງການສະບັບເລກທີ 1145/ກປ ເຖິງບັນດາຫົວໜ້າພະແນກກະສິກຳ-ປ່າໄມ້ແຂວງ ແລະ ນະຄອນຫລວງວຽງຈັນໃຫ້ເອົາໃຈໃສ່ຊີ້ນຳນຳພາກະສິກອນຈັດຕັ້ງ ແລະ ຜັນຂະຫຍາຍການຜະລິດແບບກະເສດສຸມດຳນາດ້ວຍກ້າກິບດຽວເອີ້ນວ່າ SRI (System of Rice Intensification) ແຈ້ງການດັ່ງກ່າວລະບຸວ່າ: ໂຄງການປັບປຸງຊີວິດການເປັນຢູ່ສຳລັບຜູ້ທຸກຈົນ ຢູ່ໃນ ສປປ ລາວ ເປັນໂຄງການຮ່ວມມືກັບອົງການ NGO ຂອງຍີ່ປຸ່ນ (PRO-NET21) ຈັດຕັ້ງປະຕິບັດໂດຍ ກົມຊົນລະປະທານ ຮ່ວມກັບພະແນກກະສິກຳ ແລະ ປ່າໄມ້ແຂວງຫລວງພະບາງ, ໄຊຍະບູລີ ແລະນະຄອນຫລວງວຽງຈັນ. ໂຄງການດັ່ງກ່າວມີຈຸດປະສົງເພື່ອຍົກລະດັບການຜະລິດເຂົ້າຂອງປະຊາຊົນໃນເຂດຊົນລະປະທານ ໃຫ້ສູງຂື້ນໂດຍການທົດລອງປູກເຂົ້າແບບກະເສດສຸມດຳນາແບບກ້າກິບດຽວ.

ຜ່ານການຈັດຕັ້ງປະຕິບັດມາ 4 ລະດູການເຫັນວ່າ: ສະມັດຕະພາບການຜະລິດເຂົ້າສູງຂຶ້ນ ທັງເປັນການປະຢັດນ້ຳ, ປະຢັດແນວພັນ, ການເສຍຄ່ານ້ຳ-ຄ່າກະແສໄຟຟ້າຕ່ຳ ແລະ ໄດ້ຜົນຜະລິດສູງເຊິ່ງມີຄວາມສຳຄັນຕໍ່ການນຳໃຊ້ນ້ຳຊົນລະປະທານເຂົ້າໃນການປູກເຂົ້າໃຫ້ມີ

ອ່ານຕໍ່ໜ້າ 2



## ຊາວລາຍຍິ້ມ